# ການກວດການມອງເຫັນ ແລະ ການໄດ້ຍິນຂອງ ESIT:

## ຄູ່ມືສໍາລັບຄອບຄົວກ່ຽວກັບວິທີການສາມງ່າມ



*ບໍ່ມີເດັກນ້ອຍຄົນໃດທີ່ຍັງນ້ອຍເກີນໄປທີ່ຈະກວດການມອງເຫັນ ແລະ ການໄດ້ຍິນຂອງຕົນ.*

### ເປັນຫຍັງຈຶ່ງຕ້ອງກວດເບິ່ງການມອງເຫັນ ແລະ ການໄດ້ຍິນ?

ການມອງເຫັນ ແລະ ການໄດ້ຍິນ ແມ່ນຊ່ອງທາງທີ່ສໍາຄັນທີ່ເດັກຈະຮຽນຮູ້ກ່ຽວກັບໂລກຂອງເຂົາເຈົ້າ. ການຊອກຫາຄວາມກັງວົນກ່ຽວກັບການໄດ້ຍິນ ແລະ ການມອງເຫັນຕັ້ງແຕ່ຕົ້ນຈະຊ່ວຍໃຫ້ລູກຂອງທ່ານມີການພັດທະນາການ. ທ່ານຈະໄດ້ຮັບການຊ່ວຍເຫຼືອທີ່ທ່ານຕ້ອງການຕັ້ງແຕ່ເລີ່ມຕົ້ນ.

### ວິທີການສາມງ່າມແມ່ນຫຍັງ?

ວິທີການສາມງ່າມ ແມ່ນວິທີທີ່ຜູ້ໃຫ້ບໍລິການ **ESIT (Early Support for Infants and Toddlers** (ການຊ່ວຍເຫຼືອເບື້ອງຕົ້ນສໍາລັບເດັກອ່ອນ ແລະ ເດັກໃນໄວແອບຍ່າງ)) ຂອງທ່ານ ຈະກວດເບິ່ງຄວາມກັງວົນກ່ຽວກັບການມອງເຫັນ ແລະ ການໄດ້ຍິນຂອງລູກທ່ານ. ນີ້ບໍ່ແມ່ນການກວດຢ່າງເປັນທາງການ ແລະ ບໍ່ຄວນໃຊ້ແທນການປະເມີນແບບເຕັມຮູບແບບຈາກທ່ານໝໍປົວຫູ ຫຼື ຕາ. ວິທີການສາມງ່າມ ຈະຊ່ວຍໃຫ້ພວກເຮົາຮູ້ວ່າລູກຂອງທ່ານຕ້ອງການປະເມີນການມອງເຫັນ ຫຼື ການໄດ້ຍິນແບບເຕັມຮູບແບບ ຫຼື ບໍ່.

### ສິ່ງທີ່ຈະເກີດຂຶ້ນໃນລະຫວ່າງວິທີການສາມງ່າມ?

ຜູ້ໃຫ້ບໍລິການ ESIT ຂອງທ່ານຈະ:

- ລົມກັບທ່ານກ່ຽວກັບຄວາມກັງວົນທີ່ທ່ານອາດຈະມີກ່ຽວກັບວິທີມອງເຫັນ ແລະໄດ້ຍິນຂອງລູກຂອງທ່ານ.
- ສັງເກດເບິ່ງວິທີທີ່ລູກຂອງທ່ານໃຊ້ການມອງເຫັນ ແລະ ການໄດ້ຍິນຂອງຕົນ ໃນຂະນະທີ່ພວກເຂົາຫຼິ້ນ ແລະ ເຮັດກິດຈະວັດປະຈໍາວັນຕ່າງໆ.
- ເບິ່ງບັນທຶກທາງການແພດຂອງລູກຂອງທ່ານ. ເຂົາເຈົ້າຈະຖາມທ່ານກ່ຽວກັບສິ່ງທີ່ທ່ານໝໍຂອງທ່ານໄດ້ບອກທ່ານກ່ຽວກັບສຸຂະພາບ ແລະ ການຈະເລີນເຕີບໂຕຂອງລູກທ່ານ.

### ຈະເກີດຫຍັງຂຶ້ນຫຼັງຈາກວິທີການສາມງ່າມ?

ຖ້າມີຄວາມກັງວົນໃດໆກ່ຽວກັບວິທີການມອງເຫັນ ຫຼື ໄດ້ຍິນຂອງລູກຂອງທ່ານ, ທ່ານ ແລະ ຜູ້ໃຫ້ບໍລິການ ESIT ຂອງທ່ານຈະສ້າງແຜນການຕິດຕາມ. ແຜນການນີ້ອາດຈະປະກອບມີການປະເມີນຜົນໂດຍຜູ້ໃຫ້ບໍລິການດ້ານການແພດ ແລະ/ຫຼື ການສອນພິເສດໂດຍຜູ້ໃຫ້ບໍລິການ ESIT.

### ຄ່າໃຊ້ຈ່າຍແມ່ນເທົ່າໃດ?

ບໍ່ມີຄ່າໃຊ້ຈ່າຍໃດໆສໍາລັບທ່ານ. ວິທີການສາມງ່າມນີ້ ແມ່ນສ່ວນໜຶ່ງຂອງຂະບວນການປະເມີນຜົນຂອງ ESIT ທີ່ບໍ່ໄດ້ເສຍຄ່າ.

### ມີຄໍາຖາມເພີ່ມເຕີມບໍ?

ພວກເຮົາມຸ່ງໝັ້ນທີ່ຈະສະໜັບສະໜູນທ່ານເພື່ອຊ່ວຍໃຫ້ລູກຂອງທ່ານຈະເລີນເຕີບໂຕ. ຖ້າທ່ານມີຄໍາຖາມໃດໆ, ກະລຸນາຖາມຜູ້ໃຫ້ບໍລິການ ESIT ຂອງທ່ານ.

---

*DCYF ບໍ່ໄດ້ຈໍາແນກ ແລະ ໃຫ້ການເຂົ້າເຖິງໂຄງການ ແລະ ການບໍລິການທີ່ເທົ່າທຽມກັນ ສໍາລັບທຸກຄົນ ໂດຍບໍ່ຄໍານຶງເຖິງເຊື້ອຊາດ, ສີຜິວ, ເພດ, ສາດສະໜາ, ຄວາມເຊື່ອ, ສະຖານະພາບການແຕ່ງງານ, ຊາດກໍາເນີດ, ທັດສະນະທາງເພດ, ອາຍຸ, ສະຖານະພາບຂອງນັກຮົບເກົ່າ ຫຼື ການມີຄວາມພິການທາງດ້ານຮ່າງກາຍ, ທາງດ້ານປະສາດສໍາຜັດ ຫຼື ທາງດ້ານຈິດໃຈ.*

*ຖ້າທ່ານຕ້ອງການສໍາເນົາຟຣີຂອງແຜ່ນພິມນີ້ໃນຮູບແບບ ຫຼື ພາສາທາງເລືອກ, ກະລຸນາຕິດຕໍ່ຫາ DCYF Constituent Relations* (*ຝ່າຍປະຊາສໍາພັນດ້ານການປະກອບສ່ວນຂອງ DCYF*) *ທີ່ເບີ 1-800-723-4831 ຫຼື ສົ່ງອີເມວຫາ **communications@dcyf.wa.gov**.*

DCYF PUBLICATION EL_0069 LA (05-2023) Laotian

Washington State Department of
CHILDREN, YOUTH & FAMILIES